ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງປາກລາຍ
ຫ້ອງການອຸດສາຫະກຳ ແລະ ການຄ້າ

ເລກທີ...169..../ຫອຄ.ປລ
ປາກລາຍ, ວັນທີ 13 ພຶດສະພາ 2022

# ແຈ້ງການ

ເຖິງ: ບັນດາຫົວໜ່ວຍທຸລະກິດສົ່ງເສີມ ດ້ານກະສິກຳ ພາຍໃນເມືອງ ປາກລາຍ.
ເລື່ອງ: ການສະໝັກ ຂໍທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ ຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).

- ອີງຕາມ: ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0274/ອຄ.ກຈຜງ, ລົງວັນທີ 10/03/2022ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ.
- ອີງໃສ່: ແຜນດຳເນີນງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ປີ 2022.

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງປາກລາຍ ໃນນາມ ຄູ່ຮ່ວມການຈັດຕັ້ງປະຕິບັດ ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ໃນເມືອງປາກລາຍ ມີຈຸດປະສົງ ແຈ້ງມາຍັງບັນດາຫົວໜ່ວຍທຸລະກິດ ກ່ຽວກັບການສົ່ງເສີມການຜະລິດກະສິກຳເປັນສິນຄ້າ ຊາບວ່າ: ໂຄງການມີກອງທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ ແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າ ເພື່ອເຮັດໃຫ້ກຸ່ມຜູ້ດຳເນີນກິດຈະກຳທີ່ໂຄງການສະໜັບສະໜູນສາມາດເຂົ້າເຖິງຕະຫຼາດທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງການບໍລິການຂອງທຸລະກິດ ໂດຍຜ່ານຫົວໜ່ວຍທຸລະກິດ, ໂຄງການແມ່ນຈະໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນແກ່ຫົວໜ່ວຍທຸລະກິດກະສິກຳ ທີ່ມີຄວາມສົນໃຈ ແລະ ສະໝັກເຂົ້າຮ່ວມຄັດເລືອກ ຂໍທຶນສະໜັບສະໜູນຂອງໂຄງການ.

ສຳລັບບັນດາຫົວໜ່ວຍທຸລະກິດທີ່ມີຄວາມສົນໃຈສະໝັກຂໍທຶນ ແມ່ນສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດກ່ຽວກັບຂັ້ນຕອນ ແລະ ເງື່ອນໄຂການສະໝັກຂໍທຶນໄດ້ທີ່ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງປາກລາຍ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງປາກລາຍ (ຫ້ອງການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ).

❖ ສຳລັບຂັ້ນເມືອງແມ່ນປ່ອຍທຶນສົມທົບຫົວໜ່ວຍທຸລະກິດຂະໜາດຄົວເຮືອນ ແລະ ຂະໜາດນ້ອຍ.

ເງື່ອນໄຂຫົວໜ່ວຍທຸລະກິດກະສິກຳ ມີດັ່ງນີ້:

1. ມີຄວາມສົນໃຈຢາກເຮັດວຽກຮ່ວມກັບໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).
2. ຫົວໜ່ວຍທຸລະກິດຕ້ອງມີທະບຽນວິສາຫະກິດທີ່ຖືກຕ້ອງຕາມກົດໝາຍ.
3. ຫົວໜ່ວຍທຸລະກິດຕ້ອງມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນ.
4. ຫົວໜ່ວຍທຸລະກິດມີການດຳເນີນກິດຈະການຫຼາຍກວ່າ 3 ປີ.
5. ຫົວໜ່ວຍທຸລະກິດມີຄວາມສາມາດ, ປະສົບການໃນການສົ່ງເສີມທຸລະກິດກະສິກຳ ແລະ ການເຊື່ອມໂຍງກັບຊາວກະສິກອນສູ່ຕະຫຼາດ (ການເຊັນສັນຍາເກັບຊື້ຜົນຜະລິດ).
6. ສຳລັບທຶນສົມທົບຂະໜາດນ້ອຍ ຖ້າຫົວໜ່ວຍຄົວເຮືອນໃດທີ່ມີຄວາມຕ້ອງການລິເລີ່ມທຸລະກິດ ໂດຍສະເພາະສະມາຊິກກຸ່ມຜະລິດແມ່ນສາມາດສະໝັກໄດ້ໂດຍເຂົ້າໄປປຶກສາຫາລືກັບທີມງານ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.
7. ໄລຍະເວລາປະກາດ 15 ວັນ, ເລີ່ມແຕ່ວັນທີ16-30/5/2022.

ສະນັ້ນ, ທາງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຈຶ່ງອອກແຈ້ງການສະບັບນີ້ເຖິງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມໂຄງການດັ່ງກ່າວ.

ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ

ຕິດຕໍ່ໄດ້ທີ່:
- ປະສານງານໂຄງການຂັ້ນເມືອງ ໂທ:020 59818688
- ຫ້ອງການອຸດສາຫະກຳ-ການຄ້າ ໂທ:020 22355100

ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ ປາກລາຍ

ວານິດສາ ສຸນາເຄນ
Vanithsa SOUNAKHEN

สแกนด้วย CamScanner